ຜ-ຟຟລ ແລະ ມະຫາວິທະຍາໄລຊຽງໃໝ່ (ມຊ) ຮ່ວມລົງນາມ MOU ດ້ານຍຸດທະສາດ ເພື່ອພັດທະນາຊັບພະຍາກອນມະນຸດ ແລະ ເຕັກໂນໂລຊີ







ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ມະຫາວິທະຍາໄລຊຽງໃໝ່ (ມຊ) ຮ່ວມລົງນາມ MOU ດ້ານຍຸດທະສາດ ເພື່ອພັດທະນາຊັບພະຍາກອນມະນຸດ ແລະ ເຕັກໂນໂລຊີ ໃນວັນສຸກທີ 28 ກຸມພາ 2025

ມະຫາວິທະຍາໄລຊຽງໃໝ່ (ມຊ) ແລະ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ລົງນາມໃນບົດບັນທຶກຄວາມເຂົ້າໃຈ **(MOU)** ຢ່າງເປັນທາງການ ທີ່ຫ້ອງປະຊຸມມະຫາວິທະຍາໄລ ຊຽງໃໝ່, ປະເທດໄທ.

ການລົງນາມໃນຄັ້ງນີ້ເປັນບາດກ້າວອັນສຳຄັນໃນການຮ່ວມມືດ້ານການພັດທະນາຊັບພະຍາກອນມະນຸດ ແລະ ການແລກປ່ຽນຄວາມຮູ້ໃນຂົງເຂດເຕັກໂນໂລຊີໄຟຟ້າ ແລະ ຂົງເຂດອື່ນໆ ທີ່ກ່ຽວຂ້ອງ.

ຄວາມຮ່ວມມືດັ່ງກ່າວ ສະທ້ອນເຖິງວິໄສທັດຮ່ວມຂອງທັງສອງສະຖາບັນໃນການຍົກລະດັບຄວາມສາມາດດ້ານຊັບພະຍາກອນມະນຸດ, ການສົ່ງເສີມການຮຽນຮູ້ຕະຫຼອດຊີວິດ **(Lifelong Learning Platform)** ແລະ ການພັດທະນາໂຄງການໄລຍະສັ້ນທີ່ສອດຄ່ອງກັບພາລະກິດຂອງ ລັດວິສາຫະກິດແຫ່ງ ສປປ ລາວ.

ພິທີລົງນາມ ໄດ້ຮັບກຽດຈາກ ສາດສະດາຈານ ດຣ. ພົງຣັກ ສີບັນດິດມົງຄົນ, ອະທິການບໍດີ ມຊ, ແລະ ທ່ານ ດາວວຽງ ສຸນັນທະລາດ, ຮັກສາການຜູ້ອຳນວຍການໃຫຍ່ ຜ-ຟຟລ, ເຊິ່ງເປັນຜູ້ຕາງໜ້າລົງນາມໃນ.

ພິທີດັ່ງກ່າວຍັງໄດ້ຮັບກຽດຈາກ ຮອງສາດສະດາຈານ ດຣ. ທົງໄຊ ຟອງສະມຸດ, ຄະນະບໍດີ ຄະນະວິສະວະກຳສາດ ມຊ; ດຣ. ບຸນແທນ ຈັນສະໄໝ, ຮອງຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ ; ທ່ານ ນາງ ໂພຄິນ ອັບໄພ, ຜູ້ອຳນວຍການຝ່າຍບໍລິຫານງານສະໜັບສະໜູນອົງກອນ ຜ-ຟຟລ; ພ້ອມດ້ວຍຄະນະຜູ້ບໍລິຫານຂັ້ນສູງຂອງທັງສອງຝ່າຍເຂົ້າຮ່ວມເປັນສັກຂີພິຍານ.

ການຮ່ວມມືທາງດ້ານວິຊາການໃນຄັ້ງນີ້ ເປັນບາດກ້າວອັນສຳຄັນໃນການຍົກລະດັບຄວາມເຂັ້ມແຂງທາງດ້ານວິຊາການ ແລະ ການຖ່າຍທອດເຕັກໂນໂລຊີລະຫວ່າງ ມຊ ແລະ ພາກສ່ວນພະລັງງານຂອງ ສປປ ລາວ ຄວາມຮ່ວມມືດັ່ງກ່າວຈະເປັນພື້ນຖານອັນໜັກແໜ້ນໃນການພັດທະນາບຸກຄະລາກອນໃນອະນາຄົດ ແລະ ການຂັບເຄື່ອນອຸດສາຫະກຳໄຟຟ້າໃນພາກພື້ນ.